# ສາຂາທະນາຄານແຫ່ງ ສປປ ລາວ ພາກກາງ ແຂວງສະຫວັນນະເຂດ

ຂ່າວສານ ພະແນກຄຸ້ມຄອງສະຖາບັນການເງິນ
ໂທ/ ແຟັກ : 041 252 440


NEWS

## ຂ່າວ ຝຶກອົບຮົມຄວາມຮູ້ພື້ນຖານ ໃຫ້ແກ່ ກອງທຶນບ້ານ





ສາຂາທະນາຄານແຫ່ງ ສປປ ລາວ ພາກກາງ ແຂວງສະຫວັນນະເຂດ ກໍຄື ພະແນກຄຸ້ມຄອງສະຖາບັນການເງິນ ຂຶ້ນແຜນການລົງຊ່ວຍເຫຼືອດ້ານວິຊາການໃຫ້ແກ່ ກອງທຶນບ້ານໆ ສາມສ້າງ ແລະ ກອງທຶນບ້ານ ທີ່ຢູ່ໃນເຂດທີ່ບໍ່ມີສະຖາບັນການເງິນ ໃນ 03 ແຂວງພາກກາງ ປະຈໍາປີ 2017. ເພື່ອສ້າງຄວາມເຂັ້ມແຂງທາງດ້ານວິຊາການໃຫ້ແກ່ບັນດາຄະນະກໍາມະການບໍລິຫານກອງທຶນບ້ານ ໃຫ້ສາມາດຮູ້ເຖິງລະບຽບການຂອງ ທະນາຄານແຫ່ງ ສປປ ລາວ ໃນການຄຸ້ມຄອງສະຖາບັນການເງິນ. **ເຜີຍແຜ່ ຂໍ້ກໍານົດວ່າດ້ວຍການຄຸ້ມຄອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ເລກທີ 03/ ທຫລ, ລົງວັນທີ 20 ມິຖຸນາ 2008, ການຄຸ້ມຄອງຂອງສະພາບໍລິຫານ, ການຄວບຄຸມພາຍໃນ ແລະ ການສໍ້ໂກງ** ຂອງສະຖາບັນການເງິນ ກໍຄື ກອງທຶນບ້ານ. ຈຸດປະສົງເພື່ອຊຸກຍູ້ສ້າງເງື່ອນໄຂໃຫ້ບັນດາກອງທຶນບ້ານຫັນເຂົ້າສູ່ການດໍາເນີນງານທີ່ເປັນລະບຽບການໃຫ້ຫຼາຍຂຶ້ນ ເພື່ອຄວາມເຂັ້ມແຂງດ້ານການເງິນໃນຕໍ່ໜ້າ.

  

ໃນວັນທີ 18 – 19 ມັງກອນ 2017 ທີ່ຜ່ານມານີ້ ພະແນກຄຸ້ມຄອງສະຖາບັນການເງິນ ໂດຍສົມທົບຮ່ວມກັບ ຫ້ອງການພັດທະນາຊົນນະບົດແຂວງ ແລະ ເມືອງ. ໄດ້ລົງຊ່ວຍເຫຼືອດ້ານວິຊາການຝຶກອົບຮົມຂັ້ນພື້ນຖານ ໂດຍການ ເຜີຍແຜ່ເອກະສານ ໃຫ້ແກ່ກອງທຶນບ້ານ ບ້ານນອງວິໄລ, ບ້ານແດນວິໄລ ແລະ ບ້ານປະເລາະ ຢູ່ເມືອງນອງ ແຂວງ ສະຫວັນນະເຂດ. ຊຶ່ງໃນນັ້ນ ບ້ານນອງວິໄລ ເຂົ້າຮ່ວມ ຈຳນວນ 18 ທ່ານ ແລະ ບ້ານແດນວິໄລ, ບ້ານປະເລາະ ແມ່ນ ສົມທົບກັນ ເຂົ້າຮ່ວມ ຈຳນວນ 22 ທ່ານ. ນອກນັ້ນ ວິຊາການ ພະແນກເສດຖະກິດເງິນຕາ ແລະ ຄຸ້ມຄອງເງິນຕາ ຕ່າງປະເທດ ກໍໄດ້ເຜີຍແຜ່ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ. ພ້ອມນັ້ນໃຫ້ກຽດເປັນນັກວິທະຍາກອນ ຄັ້ງນີ້ໂດຍແມ່ນ **ທ່ານ ນ. ບົວທອງ ເຄນສະບັບ ຮັກສາການຫົວໜ້າພະແນກຄຸ້ມຄອງສະຖາບັນການເງິນ.**



**ທ່ານ ບຸນເຕັມ ຊວງສາຍະວົງ ກຳມະການ ຄະນະປະຈຳສະພາປະຊາຊົນແຂວງ ແຂວງສະຫວັນນະເຂດ** ຊຶ່ງເປັນກຽດເຂົ້າຮ່ວມ ແລະ ໄດ້ມີຄຳເຫັນຕໍ່ກັບການຝຶກອົບຮົມຄັ້ງນີ້ວ່າ : ການຝຶກອົບຮົມຄັ້ງນີ້ແມ່ນຂໍສົມເຊີຍທາງ ຄະນະມາຈາກ ສາຂາທະນາຄານກາງ ແລະ ຫ້ອງການພັດທະນາຊົນນະບົດເມືອງ ສາມາດກຳແໜ້ນໄດ້ບັນດາຫຼັກການການຮັບຮູ້ ໄດ້ການເອົາໃຈໃສ່ ແລະ ການກະກຽມຄວາມພ້ອມອື່ນໆ ທີ່ຈຳເປັນ. ພ້ອມທັງ ທ່ານຍັງໄດ້ຮຽກຮ້ອງມາຍັງນັກສຳມະນາກອນ ຈົ່ງເອົາໃຈໃສ່ໃນການຕິດຕາມຮັບຟັງ ແລະ ຍາດແຍ່ງເອົາຄວາມຮູ້ ແລະ ປະສົບການ ຈາກນັກວິທະຍາກອນ ເພື່ອສາມາດ ນຳເຂົ້າໄປໝູນໃຊ້ເຂົ້າໃນວຽກງານຕົວຈິງໃຫ້ໄດ້ຮັບໝາກຜົນຫຼາຍທີ່ສຸດ.

**ຂ່າວ-ພາບ : ພະແນກຄຸ້ມຄອງສະຖາບັນການເງິນ**

ໃຊ້ເງິນກີບທົ່ວທັງຊາດ ສ້າງບົດບາດຄ່າເງິນກີບລາວ